ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---------&&&---------

ນະຄອນຫຼວງວຽງຈັນ

ເລກທີ: 0387 /ຈນວ

ລົງວັນທີ: 27 APR 2018

# ຂໍ້ຕົກລົງ

## ວ່າດ້ວຍການກຳນົດຂອບເຂດ ແລະ ປະເມີນຫົວໜ່ວຍລາຄາການທົດແທນຄ່າເສຍຫາຍ ໃຫ້ຜູ້ຖືກຜົນກະທົບຈາກໂຄງການກໍ່ສ້າງທາງລົດໄຟ ລາວ-ຈີນ ໄລຍະນະຄອນຫຼວງວຽງຈັນ

- ອີງຕາມ ມາດຕາ 19, 20 ໝວດທີ IV ຂອງກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015 ວ່າດ້ວຍພາລະບົດບາດ, ສິດ ແລະ ໜ້າທີ່ຂອງເຈົ້າແຂວງ, ເຈົ້າຄອງນະຄອນ;
- ອີງຕາມ ມາດຕາ 71, 72 ໝວດທີ 3 ຂອງກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 04/ສພຊ, ລົງວັນທີ 21 ຕຸລາ 2003; ມາດຕາ 13 ການປະເມີນມູນຄ່າທີ່ດິນ ຂອງດຳລັດ ສະບັບເລກທີ 88/ນຍ, ລົງວັນທີ 03 ມິຖຸນາ 2008 ວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍທີ່ດິນ ແລະ ດຳລັດ ສະບັບເລກທີ 84/ນຍ, ລົງວັນທີ 05 ເມສາ 2016 ວ່າດ້ວຍການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ຈາກໂຄງການພັດທະນາ;
- ອີງຕາມ ມາດຕາ 64 ຂອງກົດໝາຍວ່າດ້ວຍກະສິກຳ ສະບັບເລກທີ 01/98/ສພຊ, ລົງວັນທີ 10 ຕຸລາ 1998;
- ອີງຕາມ ມະຕິກອງປະຊຸມສະໄໝວິສາມັນ ເທື່ອທີ 1 ຂອງສະພາປະຊາຊົນ ນະຄອນຫຼວງວຽງຈັນ ຊຸດທີ I ຄັ້ງວັນທີ 04 ຕຸລາ 2017;
- ອີງຕາມ ຂໍ້ຕົກລົງ ຂອງນາຍົກລັດຖະມົນຕີ ສະບັບເລກທີ 69/ນຍ, ລົງວັນທີ 05 ສິງຫາ 2010 ວ່າດ້ວຍການຮັບຮອງປະກາດໃຊ້ລາຄາຫົວໜ່ວຍກໍ່ສ້າງຂົວທາງ ແລະ ເຄຫາສະຖານ;
- ອີງຕາມ ຜົນກອງປະຊຸມ ຄັ້ງທີ 4 ຂອງຄະນະຊີ້ນຳໂຄງການກໍ່ສ້າງທາງລົດໄຟ ລາວ-ຈີນ, ຄັ້ງວັນທີ 09 ມີນາ 2018;
- ອີງຕາມ ມະຕິກອງປະຊຸມອົງການປົກຄອງນະຄອນຫຼວງວຽງຈັນ ຄັ້ງທີ 17, ຄັ້ງວັນທີ 15-16 ມີນາ 2018;
- ອີງຕາມ ໜັງສືສະເໜີ ຂອງພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ ສະບັບເລກທີ 0996/ພຊສ.ນວ, ລົງວັນທີ 20 ມີນາ 2018.

## ເຈົ້າຄອງນະຄອນຫຼວງວຽງຈັນ ອອກຂໍ້ຕົກລົງ:

**ມາດຕາ 01 ຈຸດປະສົງ ແລະ ຂອບເຂດນຳໃຊ້**

ເຫັນດີຮັບຮອງເອົາການກຳນົດລະບຽບ, ຫຼັກການ ການທົດແທນຄ່າເສຍຫາຍ, ສິດໃຊ້, ສິດນຳໃຊ້ທີ່ດິນ, ສິ່ງປຸກສ້າງ ແລະ ພືນລະປູກ ການພັດທະນາອື່ນໆ ທີ່ຢູ່ໃນຂອບເຂດສະຫງວນຂອງໂຄງການກໍ່ສ້າງທາງລົດໄຟ ລາວ-ຈີນ ໃນ 02 ເມືອງ, ເມືອງນາຊາຍທອງ, ເມືອງໄຊທານີ ນະຄອນຫຼວງວຽງຈັນ ເພື່ອເປັນການປຸກລະດົມປະຊາຊົນທີ່ຖືກຜົນກະທົບຈາກໂຄງການດັ່ງກ່າວຮັບຮູ້ ແລະ ເຂົ້າໃຈຕໍ່ແນວທາງນະໂຍບາຍຂອງລັດຖະບານ ໃນການພັດທະນາພື້ນຖານໂຄງລ່າງ ໃຫ້ມີຄວາມຈິງໃຈປະກອບສ່ວນໃນການສ້າງສາພັດທະນາ, ນຳໄປຈັດຕັ້ງປະຕິບັດໃຫ້ຖືກຕ້ອງ ແລະ ມີປະສິດທິຜົນແນໃສ່ຮັບປະກັນໃຫ້ຜູ້ຖືກຜົນກະທົບໄດ້ຮັບການທົດແທນຄ່າເສຍຫາຍ, ການຈັດສັນຍົກຍ້າຍ, ປັບປຸງຊີວິດການເປັນຢູ່ໃຫ້ດີຂຶ້ນກວ່າເກົ່າ ຫຼື ເທົ່າເດີມ ເພື່ອພັດທະນາໂຄງການກໍ່ສ້າງທາງລົດໄຟ ລາວ-ຈີນ ໃນ 02 ເມືອງ ໃຫ້ໄດ້ຮັບການທົດແທນຄ່າເສຍຫາຍຢ່າງສົມເຫດສົມຜົນ ສອດຄ່ອງກັບດຳລັດຂອງ

ນາຍົກລັດຖະມົນຕີ ສະບັບເລກທີ 84/ລບ, ລົງວັນທີ 5 ເມສາ 2016; ເປັນພື້ນຖານໃນການຄົ້ນຄວ້າ, ເກັບກໍາຂໍ້ມູນ ແລະ ວາງຫົວໜ່ວຍການທົດແທນຄ່າເສຍຫາຍໃຫ້ຜູ້ຖືກຜົນກະທົບ.

ມາດຕາ 02 ຫຼັກການທົດແທນຄ່າເສຍຫາຍ ແລະ ເຂດສະຫງວນ

2.1. ກໍານົດຫຼັກການວິທີຄິດໄລ່ຫົວໜ່ວຍລາຄາທົດແທນຢູ່ແຕ່ລະເມືອງ, ແຕ່ລະບ້ານ ໂດຍເອົາຂໍ້ມູນການຊື້-ຂາຍຕົວຈິງຂອງແຕ່ລະເຂດມາບວກກັບເຂດປະເມີນມູນຄ່າທີ່ດິນ ຕາມຂໍ້ຕົກລົງ ສະບັບເລກທີ 352/ສນຍ.ອຄດຊ, ລົງວັນທີ 31 ພຶດສະພາ 2011 ທີ່ໃຊ້ສໍາລັບການຈົດທະບຽນ ມອບ-ໂອນ ສິດນໍາໃຊ້ທີ່ດິນປະຈຸບັນມາສະເລ່ຍເປັນລາຄາທົດແທນ.

2.2. ເຂດສະຫງວນທາງລົດໄຟ ລາວ-ຈີນ ຜ່ານເມືອງນາຊາຍທອງ, ເມືອງໄຊທານີ ຈະມີຂອບເຂດກໍານົດເປັນເຂດສະຫງວນທີ່ມີຄວາມກວ້າງ-ແຄບແຕກຕ່າງກັນ ຂຶ້ນກັບພູມສັນຖານ ແລະ ຄວາມຈໍາເປັນໃນການນໍາໃຊ້ຕົວຈິງຂອງໂຄງການ, ບາງຈຸດເປັນທາງເວັ້ນ, ບາງຈຸດເປັນສະຖານີຂະໜາດນ້ອຍ ຫຼື ສະຖານີຂະໜາດໃຫຍ່ ເຊິ່ງຂອບເຂດສະຫງວນເຫຼົ່ານັ້ນ ຈະຖືກຈັດເຂົ້າໃນລະບົບການທົດແທນ ແລະ ເປັນເຂດສະຫງວນໂຄງການຢ່າງຖາວອນ.

ທີ່ດິນເຫຼືອຈາກເຂດສະຫງວນທາງລົດໄຟ ໂຄງການເປັນຜູ້ຮັບຜິດຊອບອອກຄ່າໃຊ້ຈ່າຍໃນການດັດແກ້ ແລະ ອອກໃບຕາດິນໃໝ່ ໃຫ້ຜູ້ຖືກຜົນກະທົບໃນສ່ວນທີ່ເຫຼືອ, ທີ່ດິນທີ່ຍັງເຫຼືອໜ້ອຍ ຫຼື ຫຼາຍ ຍັງເປັນສິດໃຊ້, ສິດນໍາໃຊ້ທີ່ດິນ ທີ່ຖືກຕ້ອງຕາມກົດໝາຍຂອງຜູ້ຖືກຜົນກະທົບ.

ໂຄງການທາງລົດໄຟ ກໍານົດຫຼັກການທົດແທນສິ່ງປຸກສ້າງ ແລະ ຜົນລະປູກ ໃຫ້ຜູ້ຖືກຜົນກະທົບ, ສ້າງເງື່ອນໄຂໃຫ້ຜູ້ຍົກຍ້າຍອອກ ສາມາດປຸກສ້າງທີ່ຢູ່ອາໃສໃໝ່ໄດ້, ສິ່ງປຸກສ້າງຈະຄິດໄລ່ສະເພາະບໍລິມາດ ແຕ່ຈະບໍ່ຄິດໄລ່ມູນຄ່າຫຼຸ້ຍຫ້ຽນເຂົ້ານໍາ, ປະເພດຕົ້ນໄມ້ຄິດໄລ່ຕາມອາຍຸ, ສໍາລັບສິ່ງປຸກສ້າງ ແລະ ຕົ້ນໄມ້ ຂອງຜູ້ຖືກຜົນກະທົບສາມາດຍ້າຍ ແລະ ມ້າງອອກໄດ້ ໂດຍນໍາໃຊ້ເງິນທີ່ໄດ້ຮັບຈາກການທົດແທນ, ການທຸບມ້າງສິ່ງປຸກສ້າງ, ການຕັດຕົ້ນໄມ້ໄປນໍາໃຊ້ຕໍ່, ຈະຕ້ອງປະຕິບັດໃຫ້ທັນຕາມກໍານົດເວລາທີ່ໂຄງການວາງໄວ້, ຖ້າກາຍເວລາດັ່ງກ່າວໂຄງການອາດຈະໄດ້ນໍາໃຊ້ກົນຈັກທຸບມ້າງ, ຕັດສິ່ງກີດຂວາງອອກ.

2.3. **ຫົວໜ່ວຍລາຄາທົດແທນຄ່າເສຍຫາຍສິດໃຊ້ ແລະ ສິດນໍາໃຊ້ທີ່ດິນ**

ລາຄາທົດແທນຄ່າເສຍຫາຍສິດໃຊ້, ສິດນໍາໃຊ້ທີ່ດິນ ເຂດໂຄງການກໍ່ສ້າງທາງລົດໄຟ ລາວ-ຈີນ ເມືອງນາຊາຍທອງ ແລະ ເມືອງໄຊທານີ ນະຄອນຫຼວງວຽງຈັນ **(ລາຍລະອຽດຂອງຫົວໜ່ວຍລາຄາທົດແທນແຕ່ລະປະເພດມີເອກະສານຊ້ອນທ້າຍ).**

2.4. **ຫົວໜ່ວຍລາຄາທົດແທນຄ່າເສຍຫາຍສິ່ງປຸກສ້າງ**

ລາຄາທົດແທນຄ່າເສຍຫາຍສິ່ງປຸກສ້າງ ເຂດໂຄງການກໍ່ສ້າງທາງລົດໄຟ ລາວ-ຈີນ ເມືອງນາຊາຍທອງ ແລະ ເມືອງໄຊທານີ ນະຄອນຫຼວງວຽງຈັນ **(ລາຍລະອຽດຂອງຫົວໜ່ວຍລາຄາທົດແທນແຕ່ລະປະເພດມີເອກະສານຊ້ອນທ້າຍ).**

2.5. **ຫົວໜ່ວຍລາຄາທົດແທນຄ່າເສຍຫາຍຂອງຜົນລະປູກ**

ລາຄາທົດແທນຄ່າເສຍຫາຍຂອງຜົນລະປູກ ເຂດໂຄງການກໍ່ສ້າງທາງລົດໄຟ ລາວ-ຈີນ ເມືອງນາຊາຍທອງ ແລະ ເມືອງໄຊທານີ ນະຄອນຫຼວງວຽງຈັນ **(ລາຍລະອຽດຂອງຫົວໜ່ວຍລາຄາທົດແທນແຕ່ລະປະເພດມີເອກະສານຊ້ອນທ້າຍ).**

ມາດຕາ 03 ແຫຼ່ງທຶນໃນການທົດແທນ

ງົບປະມານໃນການທົດແທນ ແມ່ນນໍາໃຊ້ງົບປະມານໂຄງການສ້າງທາງລົດໄຟ ລາວ-ຈີນ ຕາມຄວາມຮັບຜິດຊອບ ແລະ ຕາມການຕົກລົງຂອງລັດຖະບານ.

ມາດຕາ 04 ສະຖານທີ່ ແລະ ວິທີທົດແທນ

4.1. ຜູ້ຖືກຜົນກະທົບຈາກໂຄງການກໍ່ສ້າງທາງລົດໄຟ ລາວ-ຈີນ ສາມາດສະເໜີຮັບຄ່າທົດແທນໄດ້ຈາກຄະນະໄກ່ເກ່ຍສິ່ງກີດຂວາງປະຈຳເມືອງນາຊາຍທອງ ແລະ ເມືອງໄຊທານີ ໂດຍແມ່ນຫ້ອງການປະສານງານໂຄງການກໍ່ສ້າງເສັ້ນທາງລົດໄຟ ລາວ-ຈີນ ນະຄອນຫຼວງວຽງຈັນ ເປັນຜູ້ຊຸກຍູ້, ຕິດຕາມ ແລະ ກວດກາການທົດແທນດັ່ງກ່າວ.

4.2. ວິທີການທົດແທນຄ່າເສຍຫາຍສິດໃຊ້, ສິດນຳໃຊ້ທີ່ດິນ, ສິ່ງປຸກສ້າງ ແລະ ພືນລະປູກ ຈະມີບົດບັນທຶກລະຫວ່າງ ຜູ້ໄດ້ຮັບຜົນກະທົບ ແລະ ໄດ້ຮັບການຢັ້ງຢືນຮັບຮອງຈາກຫົວໜ້າຄະນະຊີ້ນຳໂຄງການ ແລະ ຄະນະກຳມະການໄກ່ເກ່ຍສິ່ງກີດຂວາງ. ມູນຄ່າທົດແທນທີ່ຖືກຜົນກະທົບ ພາຍຫຼັງເຊັນຮັບຮອງເອົາຄ່າທົດແທນແລ້ວ ຈະໄດ້ໂອນເງິນສົດເຂົ້າບັນຊີເງິນຝາກ ຢູ່ທະນາຄານການຄ້າຕ່າງປະເທດລາວມະຫາຊົນ ໃຫ້ຜູ້ຖືກຜົນກະທົບໂດຍກົງ.

**ມາດຕາ 05 ການແກ້ໄຂຂໍ້ຂັດແຍ່ງ**

ກໍລະນີມີຂໍ້ຂັດແຍ່ງເກີດຈາກບໍ່ໄດ້ຮັບຄ່າທົດແທນຕາມມູນຄ່າທີ່ຕົກລົງກັນເປັນລາຍລັກອັກສອນແລ້ວ ຫຼື ກໍລະນີເກີດຂໍ້ຂັດແຍ່ງອື່ນໆທີ່ກ່ຽວຂ້ອງກັບການທົດແທນມູນຄ່າສິດໃຊ້, ສິດນຳໃຊ້ທີ່ດິນ, ສິ່ງປຸກສ້າງ ແລະ ພືນລະປູກ ໃນເຂດສະຫງວນໂຄງການກໍ່ສ້າງເສັ້ນທາງລົດໄຟ ລາວ-ຈີນ, ຜູ້ຖືກຜົນກະທົບມີສິດສະເໜີແກ້ໄຂຂໍ້ຂັດແຍ່ງທາງບໍລິຫານຫາການຈັດຕັ້ງທີ່ກ່ຽວຂ້ອງ ຕາມລຳດັບຂັ້ນ ເຊັ່ນ: ຂັ້ນເມືອງ ສົ່ງໃຫ້ຫາຄະນະໄກ່ເກ່ຍສິ່ງກີດຂວາງປະຈຳແຕ່ລະເມືອງ, ຂັ້ນນະຄອນຫຼວງວຽງຈັນ ສະເໜີຫາຫ້ອງການປະສານງານໂຄງການກໍ່ສ້າງເສັ້ນທາງລົດໄຟ ລາວ-ຈີນ ເຊິ່ງມີຫ້ອງການປະສານງານຕັ້ງຢູ່ພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ, ຢູ່ຂັ້ນສູນກາງມີຄະນະຄຸ້ມຄອງໂຄງການກໍ່ສ້າງເສັ້ນທາງລົດໄຟ ລາວ-ຈີນ ໂດຍແມ່ນກະຊວງໂຍທາທິການ ແລະ ຂົນສົ່ງ ເປັນໃຈກາງໃນການແກ້ໄຂບັນຫາຕ່າງໆ.

**ມາດຕາ 06 ການຈັດຕັ້ງປະຕິບັດ**

ມອບໃຫ້ຫົວໜ້າຄະນະຊີ້ນຳໂຄງການ, ອຳນາດການປົກຄອງເມືອງນາຊາຍທອງ ແລະ ອຳນາດການປົກຄອງເມືອງໄຊທານີ, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ພະແນກການເງິນ, ພະແນກໂຍທາທິການ ແລະ ຂົນສົ່ງ, ພະແນກກະສິກຳ ແລະ ປ່າໄມ້, ພະແນກແຜນການ ແລະ ການລົງທຶນ, ຄະນະກຳມະການໄກ່ເກ່ຍສິ່ງກີດຂວາງໂຄງການກໍ່ສ້າງທາງລົດໄຟ ລາວ-ຈີນ, ທຸກການຈັດຕັ້ງຂອງພັກ-ລັດ ຂອງສັງຄົມທີ່ກ່ຽວຂ້ອງ ມີໜ້າທີ່ໂຄສະນາ, ປະຊາສຳພັນ ແລະ ປຸກລະດົມປະຊາຊົນຜູ້ທີ່ຖືກຜົນກະທົບ ໃຫ້ເຂົ້າໃຈ, ເຫັນດີ ແລະ ປະກອບສ່ວນຂອງຕົນ ຊ່ວຍລັດຖະບານ ເພື່ອສຳເລັດໂຄງການກໍ່ສ້າງທາງລົດໄຟເສັ້ນປະຫວັດສາດນີ້ ເປັນຢ່າງດີ.

**ມາດຕາ 07** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຮອງ/ແທນ ເຈົ້າຄອງນະຄອນຫຼວງວຽງຈັນ

ແກ້ວພິລາວັນ ອາໄພລາດ

__ບ່ອນສົ່ງ:__

| | | |
|---|---|---|
| - ເຈົ້າຄອງ-ຮອງເຈົ້າຄອງ ນວ ທ່ານລະ | 01 ສະບັບ; |
| - ຄະນະເລຂາທິການ ສະພາປະຊາຊົນ ນວ | 01 ສະບັບ; |
| - ຄະນະຊີ້ນຳໂຄງການ ແລະ ຄະນະກຳມະການໄກ່ເກ່ຍສິ່ງກີດຂວາງໂຄງການກໍ່ສ້າງທາງລົດໄຟ | 01 ສະບັບ; |
| - ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງ... | 01 ສະບັບ; |
| - ພະແນກການເງິນ ນວ | 01 ສະບັບ; |
| - ພະແນກໂຍທາທິການ ແລະ ຂົນສົ່ງ ນວ | 01 ສະບັບ; |
| - ພະແນກກະສິກຳ ແລະ ປ່າໄມ້ ນວ | 01 ສະບັບ; |
| - ພະແນກແຜນການ ແລະ ການລົງທຶນ ນວ | 01 ສະບັບ; |
| - ເມືອງນາຊາຍທອງ ນວ | 01 ສະບັບ; |
| - ເມືອງໄຊທານີ ນວ | 01 ສະບັບ; |
| - ນາຍບ້ານກ່ຽວຂ້ອງ ບ້ານລະ | 01 ສະບັບ; |
| - ເກັບມ້ຽນສຳເນົາ | 02 ສະບັບ. |